**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ກະຊວງສາທາລະນະສຸກ ເລກທີ 482 / ກຊສ.

ວຽງຈັນ, ວັນທີ 19 ເມສາ 2002

**ຂໍ້ກຳນົດຂອງກະຊວງສາທາລະນະສຸກ**
**ວ່າດ້ວຍຮ້ານຂາຍຍ່ອຍຢາ**

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 01/ສພຊ, ລົງວັນທີ 08 ເມສາ 2000.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ເລກທີ 020/ນຍ, ລົງວັນທີ 19/3/99.
- ອີງຕາມ ນະໂຍບາຍແຫ່ງຊາດດ້ານຢາ ເລກທີ 49/ນຍ, ລົງວັນທີ 13/03/93.
- ອີງຕາມ ການສະເໜີຂອງກົມອາຫານ ແລະ ຢາ ແລະ ການຄົ້ນຄ້ວາຂອງກົມມະຫາພາກ ແລະ ການນຳຂອງກະຊວງສາທາລະນະສຸກ.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກອອກຂໍ້ກຳນົດ:**

## ໝວດທີ I
## ຫຼັກການລວມ

**ມາດຕາ 1. ຈຸດປະສົງລະດັບຄາດໝາຍ**

1. **ຈຸດປະສົງ:** ເພື່ອໃຫ້ການເຄື່ອນໄຫວຂອງຮ້ານຂາຍຢາ ມີຄວາມເປັນລະບຽບຮຽບຮ້ອຍ ໃນການດຳເນີນທຸລະກິດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບ ເລກທີ01/ສພຊ, ລົງວັນທີ 8 ເມສາ 2000 ແລະ ຫຼັກການວິຊາສະເພາະ. ແນໃສ່ຮັບປະກັນ ການບໍລິການດ້ານຢາ-ອຸປະກອນການແພດໃຫ້ມີຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ແລະ ເປັນທຳແກ່ຜູ້ບໍລິໂພກ.
2. **ຄາດໝາຍ:** ເພື່ອເຮັດໃຫ້ຮ້ານຂາຍຢາບັນລຸຕາມເງື່ອນໄຂມາດຕະຖານ ຂອງຂະແໜງວິຊາການທີ່ວາງອອກ ຊຶ່ງໄດ້ລະບຸໄວ້ໃນມາດຕາ 6, 7, 8 ແລະ ມາດຕາ 9 ຂອງຂໍ້ກຳນົດສະບັບນີ້.

**ມາດຕາ 2. ນິຍາມ**

1. **"ຢາ"** : ແມ່ນວັດຖຸຢ່າງໜຶ່ງ ຫຼື ວັດຖຸປະກອບຫຼາຍຢ່າງທີ່ອອກລິດ ແລະ ອອກລິດປະສົມເຂົ້ານຳກັນ ທີ່ນຳໃຊ້ສຳລັບກັນພະຍາດ ແລະ ປິ່ນປົວ, ຊ່ວຍໃນການພິສູດ ແລະ ບົ່ງມະຕິພະຍາດ, ບັນເທົາອາການເຈັບປວດ, ດັດແກ້, ປັບປຸງ, ເຊີດຊູ, ບຳລຸງ, ຮັກສາ ຫຼື ປ່ຽນແປງໜ້າທີ່ການ ຂອງຮ່າງກາຍ, ຟື້ນຟູສຸຂະພາບກາຍ ແລະ ຈິດໃຈຂອງຄົນ.

2. **"ຢາສາກົນ ຫຼື ຢາຫຼວງ"** : ແມ່ນຜະລິດຕະຢາທີ່ຜ່ານການປຸງແຕ່ງສຳເລັດຮູບ ຕາມສູດຕຳລາ ແລະ ກຳມະວິທີວິທະຍາສາດທີ່ແນ່ນອນ ຊຶ່ງມີການຫຸ້ມຫໍ່ ແລະ ຕິດສະຫຼາກ. ໃນນັ້ນສ່ວນປະກອບ ທີ່ອອກລິດໄດ້ຖືກດັດແປງ ໃຫ້ເໝາະສົມກັບການນຳໃຊ້ສຳລັບຄົນ.
3. **"ຢາພື້ນເມືອງ"**: ຢາພື້ນເມືອງແມ່ນຢາທີ່ມາຈາກພືດ, ຕົ້ນໄມ້, ແຮ່ທາດ, ສັດທີ່ໄດ້ຜ່ານການປຸງແຕ່ງ, ການຫຸ້ມຫໍ່ ແລະ ຕິດສະຫຼາກ. ໃນນັ້ນລັກສະນະ ແລະ ຄວາມແຮງ ການອອກລິດຍັງບໍ່ທັນໄດ້ຮັບ ການພິສູດດ້ວຍວິທະຍາສາດປະຈຸບັນ ແຕ່ຕ້ອງຖືກຮັບຮູ້ຈາກກະຊວງສາທາລະນະສຸກ.
4. **"ຮ້ານຂາຍຢາ"**: ແມ່ນວິສາຫະກິດສ່ວນບຸກຄົນ ຫຼື ນິຕິບຸກຄົນທີ່ໃຫ້ການບໍລິການດ້ານຢາ ແລະ ອຸປະກອນການແພດ.
5. **"ເຈົ້າຂອງຮ້ານຂາຍຢາ"**: ແມ່ນຜູ້ທີ່ໄດ້ຮັບໃບອະນຸຍາດໃຫ້ເຄື່ອນໄຫວວິຊາຊີບເພສັດຊະກຳທີ່ ອອກໃຫ້ໂດຍຂະແໜງການສາທາລະນະສຸກ.
6. **"ຜູ້ຊ່ວຍຂາຍຢາ"**: ແມ່ນນັກວິຊາຊີບເພສັດຊະກຳ ຫຼື ການແພດທີ່ປະຕິບັດໜ້າທີ່ຊ່ວຍເຈົ້າຂອງຮ້ານຂາຍຢາໃນການຂາຍຢາ.

**ມາດຕາ 3. ເງື່ອນໄຂຜູ້ທີ່ໄດ້ຮັບອະນຸຍາດໃຫ້ເປີດຮ້ານຂາຍຢາ**

1. ເປັນຄົນສັນຊາດລາວ ທີ່ມີພູມລຳເນົາຕັ້ງຢູ່ ສ ປ ປ ລາວ ຖາວອນບໍ່ຕ່ຳກ່ວາ 5 ປີ.
2. ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ມີພູມລຳເນົາຕັ້ງຢູ່ ສ ປ ປ ລາວ ຖາວອນ, ແຕ່ຕ້ອງໄດ້ຜ່ານລະ ບົບການຮຽນວິຊາຊີບເພສັດຊະກຳຂອງ ສປປ ລາວ ແລະ ໄດ້ອະນຸມັດຈາກກະຊວງສາທາລະນະສຸກ.
3. ສຳລັບເພສັດຊະກອນທີ່ສັງກັດລັດຢູ່ ມີສິດເປີດຮ້ານຂາຍຢາ ນອກໂມງລັດຖະການໄດ້, ແຕ່ຕ້ອງໄດ້ຜ່ານການຮັບໃຊ້ວຽກງານມາແລ້ວຢ່າງຕ່ຳ 2 ປີ ສຳລັບເຂດຫ່າງໄກສອກຫຼີກ ແລະ 3 ປີ ສຳລັບເຂດຕົວເມືອງໃຫຍ່.
4. ສຳລັບເພສັດຊະກອນທີ່ສັງກັດລັດ ຕ້ອງໄດ້ຜ່ານການຝຶກງານທາງດ້ານວິຊາຊີບເພສັດຊະກຳ ຢ່າງໜ້ອຍ 2 ປີຂຶ້ນໄປສຳລັບເຂດພູດອຍ ແລະ ເຂດຫ່າງໄກສອກຫຼີກ ແລະ 3 ປີຂຶ້ນໄປສຳ ລັບເຂດທົ່ງພຽງ ແລະ ຕົວເມືອງໃຫຍ່ ໂດຍມີໃບຢັ້ງຢືນຈາກກະຊວງສາທາລະນະສຸກ.
5. ຕ້ອງມີໃບປະກາດສະນີຍະບັດ ຫຼື ໃບຢັ້ງຢືນສຳເລັດການສຶກສາວິຊາຊີບເພສັດຊະກຳ ຊຶ່ງອອກໃຫ້ໂດຍສະຖາບັນການສຶກສາທີ່ກ່ຽວຂ້ອງ ແລະ ຮັບຮອງຈາກກະຊວງສາທາລະນະສຸກ.
6. ຕ້ອງແມ່ນຜູ້ທີ່ບໍ່ຢູ່ໃນໄລຍະຖືກດຳເນີນຄະດີ ຫຼື ປະລະໜ້າທີ່ ຫຼື ຖືກປະຕິບັດວິໄນຍ້ອນການຜິດພາດທາງດ້ານວິຊາຊີບເພສັດຊະກຳ.
7. ຕ້ອງມີສຸຂະພາບດີ ບໍ່ເປັນໂລກຈິດ ແລະ ພະຍາດຕິດແປດ, ບໍ່ເສບຢາເສບຕິດ.

## ໝວດທີ II
## ຂັ້ນຂອງຮ້ານຂາຍຢາ

**ມາດຕາ 4. ຂັ້ນຂອງຮ້ານຂາຍຢາ**

ແຕ່ປີ 2005 ເປັນຕົ້ນໄປ ໂດຍສະເພາະໃນເຂດຕົວເມືອງໃຫຍ່, ເຂດເທດສະບານແຂວງ ກຳແພງນະຄອນ ແລະ ບາງເຂດເທດສະບານເມືອງຈະໃຫ້ມີແຕ່ຮ້ານຂາຍຢາຂັ້ນ 1 ເປັນສ່ວນຫຼາຍ ແລະ ຂັ້ນ 2 ຈຳນວນໜຶ່ງ ທີ່ບໍລິຫານໂດຍເພສັດຊະກອນຕາມມາດຕະຖານ ທີ່ກະຊວງສາທາລະ ນະສຸກວາງອອກ.

ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ເພື່ອຕອບສະໜອງຄວາມຕ້ອງການ ໃນການຮັກສາສຸຂະພາບຂອງປະຊາຊົນບັນດາເຜົ່າ ໃນເຂດຊົນລະບົດຫ່າງໄກສອກຫຼີກ, ລັດຖະມົນ ຕີວ່າການກະຊວງສາທາລະນະສຸກ ຈະພິຈາລະນາເປີດ ຫຼື ປິດຮ້ານຂາຍຢາຂັ້ນອື່ນ ໃນແຕ່ລະບໍລິເວນ ເປັນແຕ່ລະໄລຍະຢ່າງເໝາະສົມ.

**ມາດຕາ 5.** ອະນຸຍາດໃຫ້ຮ້ານຂາຍຢາ ຂາຍອາຫານເສີມການແພດ, ເຄື່ອງສຳອາງການແພດ (ໂກສະເມຕິກການແພດ) ຕາມບັນຊີທີ່ກະຊວງສາທາລະນະສຸກ ໄດ້ກຳນົດ ແລະ ເກັບມ້ຽນໄວ້ໃນຕູ້ຕ່າງຫາກ ພ້ອມມີປ້ຳຍຕິດຕາມສະເພາະ.

## ໝວດທີ III
## ສະຖານທີ່ຕັ້ງ ແລະ ອຸປະກອນຮັບໃຊ້ໃນຮ້ານຂາຍຢາ

**ມາດຕາ 6. ສະຖານທີ່ຕັ້ງຮ້ານຂາຍຢາ**

1. ຮ້ານຂາຍຢາຕ້ອງຕັ້ງຢູ່ບ່ອນສະອາດ, ມີເນື້ອທີ່ຕ່ຳສຸດ 12 ຕາຕະລາງແມັດ, ເປັນຫ້ອງເຮືອນສະເພາະ, ບໍ່ປົນເປກັບສະຖານທີ່ພັກເຊົາ ແລະ ບ່ອນຂາຍເຄື່ອງອື່ນໆທີ່ບໍ່ແມ່ນຢາ. ສະເພາະ ຫ້ອງປຸງແຕ່ງຕ້ອງມີເນື້ອທີ່ຕ່ຳສຸດ 12 ຕາຕະລາງແມັດ ແລະ ມີຫ້ອງສາງຕ່າງຫາກ ຊຶ່ງມີເນື້ອ ທີ່ຢ່າງໜ້ອຍ 6 ຕາຕະລາງແມັດ.
2. ຮ້ານຂາຍຢາທີ່ໄດ້ອະນຸມັດຕັ້ງຢູ່ບ່ອນໃດທີ່ຕັ້ງຢູ່ບ່ອນນັ້ນ, ຫ້າມບໍ່ໃຫ້ຍ້າຍ, ຖ້າຢາກປ່ຽນສະຖານ ທີ່ຕັ້ງຢູ່ບ່ອນໃໝ່ ໃຫ້ປະກອບເອກະສານ ແລະ ຂໍອະນຸຍາດຄືນໃໝ່.

**ມາດຕາ 7. ປ້າຍຮ້ານຂາຍຢາ**

ຮ້ານຂາຍຢາຕ້ອງມີປ້າຍຕິດສະເພາະ, ຕ້ອງຂຽນຈະແຈ້ງ ດັ່ງລຸ່ມນີ້:

- ຊື່ຮ້ານຂາຍຢາເປັນພາສາລາວ ແລະ ພາສາກົນ;
- ທີ່ຢູ່, ໂທລະສັບ, ເລກຖະບຽນທຸລະກິດ, ເລກທະບຽນວິຊາຊີບເພສັດຊະກຳ ແລະ ຊື່ເຈົ້າຂອງ ຮ້ານ.
- ປ້າຍຮ້ານຂາຍຢາມີພື້ນສີຂຽວ ຕົວໜັງສືສີຂາວຕາມຂະໜາດທີ່ກົມອາຫານ ແລະ ຢາກຳນົດ.

**ມາດຕາ 8. ອຸປະກອນຮັບໃຊ້ພາຍໃນຮ້ານຂາຍຢາ**

ຮ້ານຂາຍຢາ ຕ້ອງມີອຸປະກອນຮັບໃຊ້ໃນການເກັບຮັກສາ ແລະ ຈ່າຍຢາ ຢ່າງຄົບຖ້ວນ ຄື:

- ຕູ້ແກ້ວເກັບຮັກສາຢາສຳລັບວາງຂາຍ;
- ຕູ້ສະເພາະເພື່ອຮັກສາຢາເບື່ອ ແລະ ຢາເສບຕິດ. ຕູ້ດັ່ງກ່າວຕ້ອງແໜ້ນໜາ ແລະ ໃສ່ກະແຈສະເພາະ.
- ຕູ້ເຢັນພ້ອມດ້ວຍເຄື່ອງວັດແທກອຸ່ນຫະພູມ ໃນກໍລະນີ ທີ່ມີຢາຕ້ອງຮັກສາໄວ້ໃນຄວາມເຢັນເຊັ່ນ: ຢາວັກແຊັງ ຫຼື ຢາຍັດທະວານ...
- ມີເຄື່ອງນັບເມັດຢາທີ່ເຮັດດ້ວຍໂລຫະທີ່ບໍ່ເຂົ້າໝ້ຽງ ຫຼື ເຮັດດ້ວຍປະລາສະຕິກ;
- ມີກັບ, ຖົງຢາງ ຫຼື ຖົງເຈ້ຍສະອາດທີ່ພິມ ຫຼື ກາຈ້ຳຂອງຮ້ານເພື່ອບັນຈຸ ແລະ ຫຸ້ມຫໍ່ຢາ.

**ມາດຕາ 9. ເອກະສານປະຈຳຮ້ານຂາຍຢາ**

**ຮ້ານຂາຍຢາທຸກຂັ້ນ ຕ້ອງມີເອກະສານປະຈຳຮ້ານ ເຊັ່ນ:**

- ໃບທະບຽນວິຊາຊີບເພສັດຊະກຳ ຈາກຂະແໜງສາທາລະນະສຸກ,

- ໃບອະນຸຍາດດຳເນີນທຸລະກິດ ຈາກຂະແໜງການຄ້າ ແລະ ໃບສັ່ງປະຕັງ ຈາກຂະແໜງສ່ວຍສາອາ ກອນ ໃຫ້ແຂວນໄວ້ໃນຮ້ານ ທີ່ເຫັນງ່າຍ;
- ປຶ້ມກົດໝາຍ, ດຳລັດ, ຂໍ້ກຳນົດ, ກົດລະບຽບ ແລະ ແຈ້ງການຕ່າງໆກ່ຽວກັບຢາ;
- ບັນຊີຢາທີ່ອະນຸຍາດໃຫ້ຂາຍ;
- ບັນຊີໝວດຢາ ທີ່ຫ້າມຂາຍ;
- ປຶ້ມຄູ່ມືການນຳໃຊ້ຢາ;
- ປຶ້ມຕິດຕາມການກວດກາຂອງພະນັກງານກວດກາ;
- ບັນຊີຕິດຕາມຢາຢູ່ພາຍໃນຮ້ານ: ຊື້ເຂົ້າ, ຂາຍອອກ, ຍັງເຫຼືອຕົວຈິງພ້ອມດ້ວຍ ວັນເດືອນປີ ໝົດອາຍຸ ແລະ ຊຸດຜະລິດ;
- ສຳເນົາໃບບິນຊື້ເຂົ້າ ແລະ ປຶ້ມໃບບິນຂາຍອອກຂອງຮ້ານ;
- ບັນຊີຢາຄວບຄຸມພິເສດ, ຢາເສບຕິດ ແລະ ຢາອອກລິດຕໍ່ຈິດປະສາດ ທີ່ຕ້ອງຂາຍຕາມໃບ ສັ່ງແພດ;
- ບັນຊີຢາອື່ນໆ ທີ່ຕ້ອງຂາຍຕາມໃບສັ່ງແພດ.

## ໝວດທີ IV

## ຄວາມຮັບຜິດຊອບຂອງຜູ້ໄດ້ຮັບອະນຸຍາດເປີດຮ້ານຂາຍຢາ

**ມາດຕາ 10.** ຜູ້ໄດ້ຮັບອະນຸຍາດເປີດຮ້ານຂາຍຢາ ຕ້ອງມີຄວາມຮັບຜິດຊອບລວມຕໍ່ຫນ້າກົດຫມາຍກ່ຽວກັບຄວາມປອດໄພໃນການບໍລິການ ນັບທັງການກະທຳຄວາມຜິດ ຂອງຜູ້ຊ່ວຍຂາຍຢາ.

**ມາດຕາ 11.** ຜູ້ຊ່ວຍຂາຍຢາຕ້ອງແມ່ນເພສັດຊະກອນ ຫຼື ແພດທີ່ມີໃບປະກາດສະນີຍະບັດທີ່ໄດ້ຮັບອະນຸມັດໃຫ້ຂາຍຢາຊ່ວຍ ຢ່າງເປັນທາງການ, ຫ້າມຜູ້ບໍ່ໄດ້ຮັບອະນຸຍາດ ມາຂາຍຢາຊ່ວຍພາຍໃນຮ້ານ.

**ມາດຕາ 12.** ຜູ້ໄດ້ຮັບອະນຸຍາດເປີດຮ້ານຂາຍຢາ ແລະ ຜູ້ຊ່ວຍຂາຍຢາຕ້ອງອຳນວຍຄວາມສະດວກ ທຸກຢ່າງ ໃນເວລາເຈົ້າຫນ້າທີ່ລົງກວດກາຮ້ານຂາຍຢາ. ຜູ້ໄດ້ຮັບອະນຸຍາດ ເປີດຮ້ານຂາຍຢາ ແລະ ຜູ້ຊ່ວຍຂາຍຢາ ຕ້ອງໃຫ້ການແນະນຳລູກຄ້າ ກ່ຽວກັບວິທີນຳໃຊ້ຢາຢ່າງຈະແຈ້ງ ເພື່ອຮັບປະກັນໃຫ້ການນຳໃຊ້ຢາ ຢ່າງຖືກ ຕ້ອງ ແລະ ສົມເຫດສົມຜົນ.

## ໝວດທີ V

## ເອກະສານຂໍໃບອະນຸຍາດວິຊາຊີບເພສັດຊະກຳເພື່ອເປີດຮ້ານຂາຍຢາ

**ມາດຕາ 13. ການປະກອບເອກະສານເພື່ອຂໍໃບອະນຸຍາດ ຫຼື ຂໍຕໍ່ໃບອະນຸຍາດວິຊາຊີບເພສັດຊະກຳ**

**13.1. ການປະກອບເອກະສານເພື່ອຂໍໃບອະນຸຍາດວິຊາຊີບເພສັດຊະກຳ:**

1. ໃບຄຳຮ້ອງ ຂໍໃບອະນຸຍາດວິຊາຊີບເພສັດຊະກຳ;
2. ໃບຊີວະປະຫວັດຫຍໍ້ ທີ່ມີຮູບຕິດ (ບໍ່ກາຍ 1 ປີ);
3. ໃບຢັ້ງຢືນສຸຂະພາບ (ບໍ່ກາຍ 3 ເດືອນ);
4. ໃບຢັ້ງຢືນທີ່ຢູ່ປະຈຸບັນ ທີ່ມີຮູບຕິດ;
5. ຮູບຖ່າຍຂະໜາດ 3x4= 03 ໃບ (ບໍ່ກາຍ 1 ປີ);
6. ໃບປະກາດສະນີຍາບັດ;
7. ໃບແຈ້ງໂທດ;
8. ໃບຢັ້ງຢືນຂອງກົມກອງທີ່ສັງກັດ ໃນກໍລະນີເປັນພະນັກງານສັງກັດລັດ;

9. ໃບຢັ້ງຢືນການຝຶກງານສຳລັບຜູ້ຮຽນຈົບໃໝ່ ທີ່ບໍ່ໄດ້ຖືກສັບຊ້ອນ;
10. ແຜນວາດທີ່ຕັ້ງຮ້ານຂາຍຢາ;
11. ໃບຢັ້ງຢືນການລົງກວດກາສະຖານທີ່ ຂອງເຈົ້າໜ້າທີ່ກ່ອນອະນຸຍາດ;
12. ບັນຊີອຸປະກອນຮັບໃຊ້ຢູ່ຮ້ານຂາຍຢາ.

**13.2. ການປະກອບເອກະສານ ເພື່ອຂໍຕໍ່ໃບອະນຸຍາດວິຊາຊີບເພສັດຊະກຳ**

1. ໃບຄຳຮ້ອງ ຂໍຕໍ່ໃບອະນຸຍາດວິຊາຊີບເພສັດຊະກຳ;
2. ໃບຢັ້ງຢືນສຸຂະພາບ (ບໍ່ໃຫ້ກາຍ 3 ເດືອນ) ;
3. ໃບຢັ້ງຢືນທີ່ຢູ່ປະຈຸບັນ ທີ່ມີຮູບຕິດ;
4. ຮູບຖ່າຍຂະໜາດ 3x4= 03 ໃບ (ບໍ່ກາຍ 1 ປີ);
5. ໃບບັນທຶກການກວດກາຮ້ານຂາຍຢາ ເພື່ອອອກອະນຸຍາດ ແລະ ທະບຽນວິຊາຊີບເພສັດ ຊະກຳ.

**ມາດຕາ 14. ການປະກອບເອກະສານເພື່ອຂໍເປັນຜູ້ຊ່ວຍຂາຍຢາ**

1. ໃບຄຳຮ້ອງຂໍຕໍ່ໃບອະນຸຍາດເປັນຜູ້ຊ່ວຍຂາຍຢາ;
2. ໃບຊີວະປະຫວັດຫຍໍ້ ທີ່ມີຮູບຕິດ (ບໍ່ກາຍ 1 ປີ);
3. ໃບຢັ້ງຢືນສຸຂະພາບ (ບໍ່ໃຫ້ກາຍ 3 ເດືອນ) ;
4. ໃບຢັ້ງຢືນທີ່ຢູ່ປະຈຸບັນ ທີ່ມີຮູບຕິດ;
5. ຮູບຖ່າຍຂະໜາດ 3x4= 03 ໃບ (ບໍ່ກາຍ 1 ປີ);
6. ໃບປະກາດສະນີຍາບັດ;
7. ໃບແຈ້ງໂທດ;
8. ໃບຮັບຮອງຂອງເຈົ້າຂອງຮ້ານຂາຍຢາ.

## ໝວດທີ VI
## ການອອກໃບທະບຽນວິຊາຊີບເພສັດຊະກຳ
## ການເປີດ-ປິດ ແລະ ການບໍລິການຂອງຮ້ານຂາຍຢາ

**ມາດຕາ 15. ຂັ້ນຕອນສະເໜີຂໍເປີດ ຫຼື ຂໍຕໍ່ຮ້ານຂາຍຢາ**

**1. ການອອກທະບຽນວິຊາຊີບເພສັດຊະກຳ.**

- ຜູ້ທີ່ມີຈຸດປະສົງຢາກຂໍເປີດ ຫຼື ຂໍຕໍ່ອາຍຸຮ້ານຂາຍຢາຂັ້ນ 1 ແລະ ຂັ້ນ 2 ຕ້ອງໄດ້ປະກອບ ເອກະສານ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 13.1 ຫຼື 13.2 ແລ້ວຍື່ນຕາມຂັ້ນຕອນຄືກັນກັບ ຮ້ານຂາຍຢາ ຂັ້ນ 3 ທີ່ໄດ້ລະບຸໄວ້ລຸ່ມນີ້.
- ຜູ້ທີ່ມີຈຸດປະສົງຢາກຂໍເປີດ ຫຼື ຂໍຕໍ່ອາຍຸຮ້ານຂາຍຢາຂັ້ນ 3 ຕ້ອງໄດ້ປະກອບເອກະສານຍື່ນ ຫ້ອງການສາທາລະນະສຸກເມືອງ (ບ່ອນທີ່ຮ້ານຂາຍຢາຕັ້ງຢູ່) ເພື່ອກວດກາ ແລະ ຈ້ອນຕາມ ທິດຊີ້ນຳຂອງກະຊວງສາທາລະນະສຸກໃນແຕ່ລະປີ ແລ້ວສົ່ງຕໍ່ພະແນກສາທາລະສຸກແຂວງ, ກຳແພງນະຄອນ, ເຂດພິເສດ ເພື່ອພິຈາລະນາຢ່າງຖີ່ຖ້ວນ ແລະ ຮັດກຸມ ແລ້ວສົ່ງໄປຍັງ ກົມອາຫານ ແລະ ຢາ ເພື່ອພິຈາລະນາຕາມແຜນການ ແລະ ສະເໜີຂໍອະນຸມັດຈາກທ່ານ ລັດຖະມົນຕີວ່າການກະຊວງສາທາລະນະສຸກ.
- ໃບທະບຽນວິຊາຊີບເພສັດຊະກຳມີອາຍຸການນຳໃຊ້ 1 ປີ; 3ເດືອນກ່ອນຈະໝົດອາຍຸການນຳໃຊ້ ໃຫ້ປະກອບເອກະສານເພື່ອຂໍຕໍ່ອາຍຸຕື່ມ.

- ຜູ້ຖືໃບທະບຽນວິຊາຊີບເພສັດຊະກຳ ຕ້ອງໄດ້ຈ່າຍຄ່າທຳນຽມ ຕາມລະບຽບການ.

2. **ການເປີດຮ້ານຂາຍຢາ.**
   - ຜູ້ທີ່ຮັບໃບທະບຽບວິຊາຊີບເພສັດຊະກຳແລ້ວ ຕ້ອງໄດ້ປະກອບເອກະສານ ຍື່ນຕໍ່ຂະແໜງການຄ້າ ຕາມລະບຽບການ.

1. **ການປິດຮ້ານຂາຍຢາ.**

ກົມອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ,ກຳແພງນະຄອນ, ເຂດພິເສດມີ ໜ້າທີ່ຄຸ້ມຄອງ, ກວດກາການເຄື່ອນໄຫວຂອງຮ້ານຂາຍຢາ ແລະ ສະເໜີ ໃຫ້ປິດຮ້ານຂາຍຢາ ຊົ່ວຄາວ ຫຼື ຖາວອນ ຖ້າຫາກມີຄວາມຈຳເປັນ ໂດຍສົມທົບກັບພະແນກການຄ້າ ຕາມກໍລະນີ ລຸ່ມນີ້:

<u>ປິດຊົ່ວຄາວ</u>: ໃບທະບຽນວິຊາຊີບເພສັດຊະກຳ ໝົດອາຍຸການນຳໃຊ້.

<u>ປິດຖາວອນ</u>:

- ກໍລະນີຮ້ານຂາຍຢາ ຫາກຂາຍຢາເສບຕິດທີ່ທາງການເກືອດຫ້າມ ເຊັ່ນ: ອຳເຟຕະມີນ, ເຮໂຣອີນ....
- ເຈົ້າຂອງຮ້ານຂາຍຢາເສຍຊີວິດ.
- ບໍ່ມີໃບທະບຽນວິຊາຊີບເພສັດຊະກຳ.
- ໃນກໍລະນີ ຖືກກ່າວເຕືອນ ແລະ ປັບໃໝມາແລ້ວ 3 ຄັ້ງ.
- ໃນກໍລະນີ ທີ່ມີການກະທຳຜິດຢ່າງຮ້າຍແຮງ ເຖິງແກ່ເສຍຊີວິດຂອງຄົນເຈັບ.

**ມາດຕາ 16. ການບໍລິການ**

ຮ້ານຂາຍຢາ ຕ້ອງມີພັນທະບໍລິການໃນຍາມກາງຄືນ ໂດຍຜັດປ່ຽນກັນຕາມການມອບໝາຍຂອງຫ້ອງການສາທາລະນະສຸກເມືອງ ທີ່ກ່ຽວຂ້ອງ.

ຮ້ານຂາຍຢາຕ້ອງປະຕິບັດລາຄາດຽວ ໃນການບໍລິການຕະຫຼອດ 24 ຊົ່ວໂມງ (ຫ້າມຂຶ້ນລາຄາຢາໃນເວລາກາງຄືນ).

## ໝວດທີ VII
## ຂໍ້ຫ້າມຕ່າງໆ

**ມາດຕາ 17. ເນື່ອງຈາກວ່າຢາເປັນ 5 ຊະນິດສິນຄ້າພິເສດ 5 ຊະນິດ ຮ້ານຂາຍຢາຕ້ອງປະຕິບັດ ຢ່າງເຂັ້ມງວດ ຕໍ່ຂໍ້ຫ້າມດັ່ງລຸ່ມນີ້: (ລວມ13 ຂໍ້)**

1. ຫ້າມຕັ້ງຮ້ານຂາຍຢາ ຢູ່ໃນບໍລິເວນການຄຸ້ມຄອງຂອງຈັດສັນຕະຫຼາດສົດ ຫຼື ຢູ່ໃນຫ້ອງກວດພະຍາດເອກະຊົນ ຫຼື ຄລີນິກ.
2. ຫ້າມຮ້ານຂາຍຢາຂາຍ ເກີນບັນຊີຢາ ທີ່ຕົນໄດ້ຮັບອະນຸມັດໃຫ້ຂາຍ.
3. ຫ້າມຂາຍຢາປົນເປກັບສິນຄ້າຊະນິດອື່ນ ຍົກເວັນເຄື່ອງທີ່ກ່າວໄວ້ໃນມາດຕາ 5 ຂອງຂໍ້ກຳນົດສະບັບນີ້.
4. ຫ້າມຂາຍຢາຕາມສະຖານທີ່ໆທາງການບໍ່ໄດ້ອະນຸມັດໃຫ້ຂາຍ.
5. ຫ້າມບັນຈຸຢາຫຼາຍຊະນິດປົນເປກັນໃສ່ໃນກັບ, ຖົງ ຫຼື ຫໍ່ດຽວກັນໃຫ້ຜູ້ຊື້ (ຕ້ອງບັນຈຸຢາແຕ່ລະຊະນິດໃສ່ກັບ,ຖົງ ຫຼື ແຍກກັນ ພ້ອມທັງຂຽນຊື່, ຄວາມແຮງ, ວິທີໃຊ້ ແລະ ຈຳນວນຢາ ຢ່າງຈະແຈ້ງ).
6. ຫ້າມເອົາຮ້ານຂາຍຢາເປັນບ່ອນກວດພະຍາດ ແລະ ປິ່ນປົວຄົນເຈັບ.
7. ຫ້າມນຳໃຊ້ຜູ້ທີ່ບໍ່ໄດ້ຮັບອະນຸຍາດ ມາຂາຍຢາຊ່ວຍຢູ່ໃນຮ້ານຂອງຕົນ.

8. ຫ້າມໂອນ ຫຼື ຂາຍ ຫຼື ໃຫ້ເຊົ່າໃບທະບຽນວິຊາຊີບເພສັດຊະກຳ.
9. ຫ້າມຂາຍຢາເບື່ອ, ຢາອັນຕະລາຍ ແລະ ຢາເສບຕິດທີ່ບໍ່ມີໃບສັ່ງແພດຊຶ່ງຈະມີບັນຊີການກຳນົດຕ່າງຫາກ.
10. ຫ້າມປ່ຽນແປງພາຊະນະບັນຈຸຢາ ຈາກຫົວໜ່ວຍມັດທີ່ເດີມ ວາງຂາຍຢູ່ໃນຮ້ານ.
11. ຫ້າມຍົກຍ້າຍຮ້ານຂາຍຢາ.
12. ຫ້າມຈຳໜ່າຍຢາທີ່ບໍ່ໄດ້ຕິດສະແຕມຢາ.
13. ຫ້າມຮ້ານຂາຍຍ່ອຍຢາ ຂາຍຍົກຢາ.

**ມາດຕາ 18. ຫ້າມຮ້ານຂາຍຢາ ຊື້/ຂາຍ ແລະ ເກັບມ້ຽນຢາດັ່ງລຸ່ມນີ້:**

1. ຢາຕົກມາດຕະຖານ: ຢາບໍ່ມີສະຫຼາກ ຫຼື ມີສະຫຼາກບໍ່ຈະແຈ້ງ, ຢາໝົດອາຍຸການນຳໃຊ້, ຢາເຊື່ອມຄຸນນະພາບ ແລະ ອື່ນໆທີ່ທາງການກຳນົດ. ຢາເຖື່ອນ: ຢາຕົວແບບ, ຢາໜີພາສີ, ຢາບໍ່ໄດ້ຕິດສະແຕມຂອງກົມອາຫານ ແລະ ຢາ, ຢາທີ່ໄດ້ມາຈາກແຫຼ່ງບໍ່ຖືກຕ້ອງ ແລະ ອື່ນໆ.
2. ຢາປອມ, ຢາທີ່ທາງການເກືອດຫ້າມທຸກຊະນິດ.
3. ຢາບໍ່ມີໃບບິນຊື້ / ຂາຍຢ່າງຖືກຕ້ອງ ຕາມທາງການກຳນົດ.

## ໝວດທີ VIII
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19.** ຜູ້ທີ່ລະເມີດຕໍ່ຂໍ້ກຳນົດສະບັບນີ້ຈະຖືກກ່າວເຕືອນ, ປັບໃໝ ແລະ ລົງໂທດ ຕາມກໍລະນີໜັກ ຫລື ເບົາ ດັ່ງລາຍລະອຽດຕໍ່ໄປນີ້:

1. ຜູ້ທີ່ລະເມີດຄັ້ງທີ 1
   - **ຕໍ່ມາດຕາ:** 8, 9, 16, 17.1, 17.2, 17.3, 17.4, 17.5, 17.6, 17.7,17.8, 17.9, 17.10, 17.12 ແລະ 17.13 ຕ້ອງຖືກກ່າວເຕືອນ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ.
   - **ຕໍ່ມາດຕາ:** 18.1, 18.2 ແລະ 18.3 ຕ້ອງຖືກຍຶດສິນຄ້າ ແລະ ປັບໃໝສອງເທົ່າຂອງມູນຄ່າສິນຄ້າຕາມທ້ອງຕະຫຼາດ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ 19.2. ຜູ້ທີ່ລະເມີດຄັ້ງທີ່ 2
   - **ຕໍ່ມາດຕາ:** 17.1 ແລະ 18.2 ຕ້ອງຖືກປິດຢ່າງຖາວອນ.
   - **ຕໍ່ມາດຕາ:** 17.2, 17.2, 17.3, 17.4 ແລະ 17.5, 17.12, 17.13 ຕ້ອງຖືກຍຶດສິນຄ້າ ແລະ ປັບໃໝສອງເທົ່າຂອງມູນຄ່າສິນຄ້າຕາມທ້ອງຕະຫຼາດ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ.
   - **ຕໍ່ມາດຕາ:** 8, 9, 16, 17.7 ແລະ 17.8 ຕ້ອງຖືກປັບໃໝບໍ່ເກີນ 50.000 ກີບ (ຫ້າສິບພັນກີບ) ແລະ ບັນທຶກໄວ້ໃນປຶ້ມຕິດຕາມ.
   - **ຕໍ່ມາດຕາ:** 17.6 ແລະ 17.9 ຕ້ອງຖືກປັບໃໝບໍ່ເກີນ 150.000 ກີບ (ໜຶ່ງຮ້ອຍຫ້າສິບພັນກີບ ) ແລະ ບັນທຶກໄວ້ໃນປຶ້ມຕິດຕາມ.
   - **ຕໍ່ມາດຕາ:** 18.1 ແລະ 18.3 ຕ້ອງຖືກຍຶດສິນຄ້າແລະປັບໃໝ 4 ເທົ່າຂອງມູນຄ່າສິນຄ້າຕາມທ້ອງຕະຫຼາດ 19.3. ຜູ້ທີ່ລະເມີດຄັ້ງທີ 3
   - **ຕໍ່ມາດຕາ:** 8, 9, 16, 17.2, 17.3, 17.5 ແລະ 17.7 ຕ້ອງຖືກປິດຊົ່ວຄາວ 6 ເດືອນ ຫາ 1 ປີ.
   - **ຕໍ່ມາດຕາ:** 17.4,17.6, 17.8, 17.11, 18.1 ແລະ 18.3 ປິດຢ່າງຖາວອນ.

**ມາດຕາ 20.** ໃນກໍລະນີ ຮ້າຍແຮງເປັນອັນຕະລາຍເຮັດໃຫ້ຜູ້ຊົມໃຊ້ຢາເສຍອົງຄະ, ເຖິງຂັ້ນເສຍຊີວິດເຈົ້າຂອງຮ້ານຂາຍຢາຕ້ອງຢຸດກິດຈະການຢ່າງຖາວອນ ແລະ ຖືກຮ້ອງຟ້ອງຂຶ້ນສານເພື່ອດຳເນີນຄະດີ ຕາມລະບຽບກົດໝາຍ.

## ໝວດທີ X
## ການຈັດຕັ້ງປະຕິບັດ

**ມາດຕາ 21.** ມອບໃຫ້ກົມອາຫານ ແລະ ຢາ ຜັນຂະຫຍາຍໃຫ້ເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດ ຂໍ້ກຳນົດສະບັບນີ້ ໂດຍສົມທົບກັບພະແນກສາທາລະນະສຸກແຂວງ, ກຳແພງນະຄອນ ແລະ ເຂດພິ ເສດ ແລະ ບັນດາຂະແໜງການອື່ນໆ ທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

ທຸກຂໍ້ກຳນົດ ກົດລະບຽບ, ຄຳສັ່ງແນະນຳທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ທີ່ຂັດກັບເນື້ອໃນ ຂອງຂໍ້ກຳນົດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ມາດຕາ 22:** ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ດຣ. ປອນເມກ ດາລາລອຍ